**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ
ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເລກທີ 97 /ສຕສ
ທີ່ນະຄອນຫຼວງວຽງຈັນ, ລົງວັນທີ 07 ກຸມພາ 2024

# ຂໍ້ກຳນົດ
# ວ່າດ້ວຍ ລະບຽບການຄຸ້ມຄອງນັກສຶກສາ
# ຂອງສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ສະບັບເລກທີ 794/ກຕສ, ລົງວັນທີ 15 ມີນາ 2022;
- ອີງຕາມ ການຊີ້ນຳຂອງຄະນະນຳ ສຕສ ຄັ້ງວັນທີ 01 ພະຈິກ 2023;

## ຫົວໜ້າສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ອອກຂໍ້ກຳນົດ:

ມາດຕາ 1: ຈຸດປະສົງ:

ລະບຽບ ການຄຸ້ມຄອງນັກສຶກສາ ສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ ຂອງ ສຕສ, ເພື່ອເປັນບ່ອນອີງທາງດ້ານນິຕິກຳໃນການຈັດຕັ້ງເຄື່ອນໄຫວຂອງ ສຕສ;

ມາດຕາ 2: ຄາດໝາຍ:

ເພື່ອປະຕິບັດໃຫ້ຖືກຕ້ອງການກຳນົດຕາມສິດ ໜ້າທີ່ ແລະ ລະບຽບການ ການເຄື່ອນໄຫວຂອງ ສຕສ, ຕົກລົງເຫັນດີເປັນເອກະພາບເພື່ອສ້າງລະບຽບ ວ່າດ້ວຍການຄຸ້ມຄອງນັກສຶກສາຂອງ ສຕສ ດັ່ງລາຍລະອຽດລຸ່ມນີ້:

ມາດຕາ 3: ນັກສຶກສາ ຂອງ ສຕສ.

ແມ່ນຜູ້ທີ່ໄດ້ລົງທະບຽນເປັນນັກສຶກສາຢ່າງຖືກຕ້ອງຕາມລະບຽບການຕ່າງໆ ທີ່ທາງ ສຕສ ໄດ້ກຳນົດໄວ້;

ມາດຕາ 4: ເງື່ອນໄຂຂອງຜູ້ທີ່ຈະເປັນນັກສຶກສາ ສຕສ ມີດັ່ງນີ້:

- ຕ້ອງມີລະດັບການສຶກສາຈົບມັດທະຍົມຕອນປາຍ ຫຼື ທຽບເທົ່າ;
- ຈົບວິຊາສະເພາະລະດັບຊັ້ນກາງ, ຊັ້ນສູງ (ລະດັບຊັ້ນກາງ, ຊັ້ນສູງ ຂອງຂະແໜງການ ເຕັກໂນໂລຊີ, ໄອຊີທີ ຫຼື ຂະແໜງ ການອື່ນ ທີ່ກ່ຽວຂ້ອງກັບ ຂະແໜງການ ຕສ ມາກ່ອນ);
- ຜ່ານການສອບເສັງເຂົ້າ ສຕສ ໄດ້ຄະແນນ 2,5 ຕາມຄາດໝາຍທີ່ ສຕສ ໄດ້ວາງໄວ້;

- ໄດ້ຮັບການຄັດເລືອກໃຫ້ມາຮຽນຕາມແຜນແບ່ງປັນຂອງ ກະຊວງ ຕສ;
- ຜູ້ທີ່ມີເງື່ອນໄຂຈະເຂົ້າຮຽນນັ້ນ ຕ້ອງແມ່ນຜູ້ທີ່ມີສຸຂະພາບແຂງແຮງ, ບໍ່ມີພະຍາດຕິດແປດ ແລະ ຮ່າງກາຍຄົບຖ້ວນສົມບູນ;
- ຄຸນສົມບັດດີ, ຜ່ານມາບໍ່ມີປະຫວັດເຄື່ອນໄຫວທີ່ບໍ່ດີ, ບໍ່ມີຄະດີຕ້ອງໂທດທຸກກໍລະນີ, ຈຶ່ງສາມາດເຂົ້າຮຽນຢູ່ໃນ ສຕສ ແຫ່ງນີ້;
- ນັກສຶກສາທຸກຄົນຕ້ອງສະເໜີຕົວລົງທະບຽນ, ເສຍເງິນຄ່າຮຽນ ເປັນປົກກະຕິກ່ອນເຂົ້າຮຽນ ຫຼື ບໍ່ໃຫ້ກາຍ ພາຍໃນ 1 ເດືອນຕົ້ນປີ (ກໍລະນີມີຄວາມຫຍຸ້ງຍາກທີ່ຈຳເປັນໃຫ້ຜູ້ປົກຄອງມາເຮັດບົດບັນທຶກສັນຍາຈ່າຍເງິນຄ່າຮຽນກັບ ສຕສ ບໍ່ໃຫ້ກາຍພາຍໃນກຳນົດ 2 ເດືອນ) ຖ້າກາຍກຳນົດແມ່ນ ສຕສ ຈະໄດ້ປັບໃໝຕາມລະບຽບການ ຫຼື ລຶບລ້າງລາຍຊື່ອອກຈາກການເປັນນັກສຶກສາ ສຕສ;

ມາດຕາ 5: ເຄື່ອງໝາຍນັກສຶກສາພາຍໃນ ສຕສ.

ນັກສຶກສາ ທຸກຄົນຕ້ອງມີບັດປະຈຳຕົວນັກສຶກສາເພື່ອນຳໃຊ້ສຳລັບການສຶກສາ ແລະ ເຄື່ອນໄຫວກິດຈະກຳຕ່າງໆ, ບັດປະຈຳຕົວນັກສຶກສາຈະໄດ້ຕໍ່ອາຍຸໃນທຸກໆ ສົກຮຽນ ໂດຍແມ່ນ ຫົວໜ້າ ສຕສ ເປັນຜູ້ຮັບຮອງ;

ມາດຕາ 6: ໜ້າທີ່ຂອງນັກສຶກສາ ສຕສ.

- ນັກສຶກສາທຸກຄົນ ຕ້ອງເອົາໃຈໃສ່ ຄົ້ນຄວ້າຮໍ່າຮຽນທຸກວິຊາຮຽນ ໃຫ້ຄົບຖ້ວນຕາມຫຼັກສູດທີ່ ສຕສ ໄດ້ກຳນົດໄວ້;
- ຕັ້ງໜ້າປະຕິບັດຂໍ້ກຳນົດກົດລະບຽບ, ປະກາດແຈ້ງການ, ມະຕິຄຳສັ່ງຕ່າງໆທີ່ການຈັດຕັ້ງໄດ້ວາງອອກ ແລະ ເປັນເຈົ້າການເຂົ້າຮ່ວມໃນກິດຈະກຳຕ່າງໆທີ່ການຈັດຕັ້ງຂອງ ສຕສ ຈັດຂຶ້ນ;
- ການຊົມໃຊ້ຫ້ອງທົດລອງ, ຫ້ອງສະໝຸດ, ຫ້ອງປະຕິບັດ ແລະ ວັດຖຸສິ່ງຂອງອື່ນໆ ທີ່ເປັນຂອງສ່ວນລວມຕ້ອງຜ່ານການອະນຸຍາດນຳໃຊ້, ພ້ອມທັງປະຕິບັດຕາມລະບຽບການ ທີ່ແຕ່ລະພາກສ່ວນວາງອອກ;

ມາດຕາ 7: ການປະພຶດຂອງນັກສຶກສາ ສຕສ.

- ນັກສຶກສາທຸກໆ ຄົນຕ້ອງມີຄຸນສົມບັດທີ່ດີ, ສຸພາບຮຽບຮ້ອຍ, ຖະໜອມຖ່ອມຕົນ, ເຄົາລົບນັບຖືພະນັກງານ, ຄູ-ອາຈານ ແລະ ພົວພັນສາມັກຄີຊ່ວຍເຫຼືອຊຶ່ງກັນ ແລະ ກັນລະຫວ່າງນັກສຶກສາ ແລະ ພະນັກງານພາຍໃນ ສຕສ ຢ່າງຖືກຕ້ອງ;
- ນັກສຶກສາທຸກຄົນຕ້ອງຮັກສາຮີດຄອງປະເພນີອັນຈົບງາມຂອງຊາດ, ປົກປັກຮັກສາເສີມຂະຫຍາຍສິລະປະ, ວັດທະນະທຳຂອງຊາດ, ຮູ້ຮັກມູນເຊື້ອຄວາມສາມັກຄີຊົນຊາດ, ຊົນເຜົ່າ ແລະ ເພດ ຢ່າງຖືກຕ້ອງ;

ມາດຕາ 8: ຄວາມຮັບຜິດຊອບ ຂອງນັກສຶກສາຕໍ່ ສຕສ.

- ນັກສຶກສາ ທຸກຄົນຕ້ອງປົກປັກຮັກສາເຄື່ອງຂອງສ່ວນລວມ, ຊ່ວຍກັນປົກປັກຮັກສາທຳມະຊາດ ແລະ ສິ່ງແວດລ້ອມ, ຮັກສາຄວາມສະອາດຈົບງາມໃນຫ້ອງຮຽນ ແລະ ສະຖານທີ່ສາທາລະນະຕ່າງໆ ພາຍໃນ ສຕສ;
- ປະກອບສ່ວນເຂົ້າໃນການເຄື່ອນໄຫວກິດຈະກຳຕ່າງໆເຊັ່ນ: ວຽກປ້ອງກັນ, ສິລະປະວັນນະຄະດີ, ກິລາ ແລະ ວຽກອື່ນໆ;

ມາດຕາ 9: ການແຕ່ງກາຍຂອງ ນັກສຶກສາ ພາຍໃນ ສຕສ.

ໃນຊົ່ວໂມງຮຽນ ຫຼື ໃນການໄປພົວພັນວຽກງານຕາມສະຖານທີ່ລັດຖະການ ແລະ ໃນພິທີທາງການຕ່າງໆ ນັກສຶກສາ ສຕສ ທຸກຄົນຕ້ອງນຸ່ງເຄື່ອງແບບນັກສຶກສາຂອງ ສຕສ ໄດ້ກຳນົດໄວ້ຄືດັ່ງລຸ່ມນີ້:

ກ/. ສຳລັບນັກສຶກສາ ຍິງ:

- ສິ້ນສີດຳ ຫຼື ສີຟ້າແກ່ ມີຕີນກວ້າງ 10-15 ຊມ, ບໍ່ລ່າມ ແລະ ບໍ່ເຂີນເກີນຄວນ;
- ເສື້ອເຊີດສີຂາວ ແລະ ມີກາໝາຍຂອງ ສຕສ ຫຍິບຕິດໃສ່ກົກແຂນເສື້ອເບື້ອງຊ້າຍ ແລະ ມັດກາລະວັດ ທີ່ມີກາໝາຍຂອງ ສຕສ ໄດ້ກຳນົດໃຫ້;
- ສາຍແອວໂລຫະແບບລາວໆ ຫຼື ໜັງສີດຳ ກວ້າງບໍ່ໃຫ້ເກີນ 3 ຊມ, ຫົວສາຍແອວບໍ່ມີລວດລາຍເກີນຄວນ;
- ເກີບຫຸ້ມສົ້ນສີດຳ ຫຼື ສີນ້ຳຕານແກ່ ສູງບໍ່ເກີນ 4 ຊມ;
- ຜົມແຕ່ງແບບເກົ້າຜົມ, ມັດ ຫຼື ເປຍຢ່າງຮຽບຮ້ອຍ;

ຂ/. ສຳລັບນັກສຶກສາ ຊາຍ:

- ໂສ້ງຂາຍາວສີດຳ ຫຼື ສີຟ້າແກ່ຕັດດ້ວຍແພທຳມະດາປາຍຂາໂສ້ງກວ້າງລະຫວ່າງ 20-24 ຊມ;
- ເສື້ອເຊີດສີຂາວ ແລະ ມີກາໝາຍຂອງ ສຕສ ຫຍິບຕິດໃສ່ກົກແຂນເສື້ອເບື້ອງຊ້າຍ ແລະ ມັດກາລະວັດ ທີ່ມີກາໝາຍຂອງ ສຕສ ໄດ້ກຳນົດໃຫ້;
- ເກີບໜັງ ຫຼື ເກີບແພແບບຫຸ້ມສົ້ນ ສີດຳ ຫຼື ສີນ້ຳຕານແກ່, ບໍ່ມີລວດລາຍເກີນຄວນ;
- ສາຍແອວໜັງສີດຳກວ້າງບໍ່ໃຫ້ເກີນ 3 ຊມ, ຫົວສາຍແອວບໍ່ມີລວດລາຍເກີນຄວນ;
- ຕັດຜົມແບບຈອນໜາທຳມະດາ ແລະ ຫວີໃຫ້ຈົບງາມ;

ມາດຕາ 10: ການປະພຶດຕົນຂອງນັກສຶກສາໃນຫ້ອງຮຽນ.

ນັກສຶກສາທຸກໆຄົນ ຕ້ອງປະຕິບັດຕົນໃຫ້ ເປັນນັກສຶກສາທີ່ດີ, ມີກິລິຍາມາລະຍາດດີ ແລະ ເປັນແບບຢ່າງຢູ່ພາຍໃນຫ້ອງຮຽນຄື:

- ນັກສຶກສາທຸກໆຄົນ ຕ້ອງເຂົ້າຫ້ອງຮຽນກ່ອນ ຄູ-ອາຈານ ຊ້າສຸດ 5 ນາທີ ເພື່ອກວດກາຈຳນວນພົນ, ເມື່ອ ຄູ-ອາຈານ ເຂົ້າຫ້ອງສອນນັກສຶກສາທຸກຄົນ ຕ້ອງລຸກຂຶ້ນທຳຄວາມເຄົາລົບ ແລະ ຄະນະຫ້ອງຕ້ອງລາຍງານ ຈຳນວນນັກສຶກສາ ທີ່ຂາດຮຽນໃຫ້ ຄູ-ຈານ ໄດ້ຮັບຮູ້ໃນແຕ່ລະວິຊາຮຽນ ຂອງແຕ່ລະມື້;
- ນັກສຶກສາ ກ່ອນຈະເຂົ້າ-ອອກ, ຢາກຖາມ ຫຼື ຕອບຄູ-ອາຈານ ຢູ່ຫ້ອງຮຽນ ນັກສຶກສາຕ້ອງຍົກມືຂໍອະນຸຍາດຈາກ ຄູ-ອາຈານ ເສຍກ່ອນ;
- ໃນຫ້ອງຮຽນຕ້ອງຕັ້ງໃຈຮຽນບໍ່ຢອກໃຍກັນ, ບໍ່ບິນແຊວ, ບໍ່ໃຊ້ໂທລະສັບ, ເວລາເລີກຮຽນອອກຫ້ອງຮຽນຕ້ອງມອດໄຟ, ມອດພັດລົມ, ມອດແອ, ເກັບມ້ຽນວັດຖຸອຸປະກອນຕ່າງໆ ແລະ ອັດປະຕູຫ້ອງຮຽນ;
- ນັກສຶກສາທຸກຄົນຕ້ອງເຂົ້າຮ່ວມເຄື່ອນໄຫວກິດຈະກຳຕ່າງໆ ຕາມລະບຽບ ແລະ ການຈັດຕັ້ງທຸກຂັ້ນກຳນົດໄວ້;

ມາດຕາ 11: ຂໍ້ຫ້າມຕ່າງໆ ຂອງນັກສຶກສາໃນ ສຕສ ຖ້າຜູ້ໃດລ່ວງລະເມີດກະທຳຜິດຕໍ່ບັນດາຂໍ້ຫ້າມລຸ່ມນີ້ຖືວ່າມີຄວາມຜິດ:

1) ຫ້າມຈັດຕັ້ງອົງການໃດໜຶ່ງ ຫຼື ຈັດຕັ້ງຊຸມນຸມໃດໜຶ່ງຂຶ້ນໂດຍບໍ່ໄດ້ຮັບການອະນຸມັດ;
2) ຫ້າມນຳເອົາອາວຸດ, ວັດຖຸລະເບີດ ສານພິດທຸກຊະນິດເຂົ້າມາໃນ ສຕສ;

3) ຫ້າມສົມຮູ້ຮ່ວມຄິດ ຫຼື ຊຸກເຊື່ອງເອົາຄົນປະເພດໂຕນຄຸກທີ່ເຈົ້າໜ້າທີ່ພວມນຳຈັບ, ຄົນປະເພດໂສເພນີ ຫຼື ເປັນນັກເລງອັນຕະພານເຂົ້າມາພາຍໃນ ສຕສ;
4) ຫ້າມບໍ່ໃຫ້ກໍ່ຄວາມອາລະວາດ ຫຼື ສ້າງຄວາມບໍ່ສະຫງົບພາຍໃນ ສຕສ ຫຼື ຢູ່ແຫ່ງອື່ນໆ;
5) ຫ້າມທຳລາຍ ຫຼື ປອມແປງລາຍເຊັນ ຫຼື ເອກະສານທາງການຕ່າງໆ;
6) ຫ້າມເສບ, ຄ້າຂາຍ, ຜະລິດ ຫຼື ມີຢາເສບຕິດປະເພດຕ້ອງຫ້າມໄວ້ໃນຄອບຄອງ;
7) ຫ້າມນຳໃຊ້ ຫຼື ເຜີຍແຜ່ອຸປະກອນ ແລະ ສິ່ງລາມົກອານະຈານຕ່າງໆ ພາຍໃນ ສຕສ;
8) ຫ້າມຜົວພັນທີ່ກະທຳຄວາມຜິດຕໍ່ເພດກົງກັນຂ້າມທີ່ຜິດຮີດຄອງປະເພນີຂອງຊາດລາວພາຍໃນ ສຕສ ແລະ ຢູ່ແຫ່ງອື່ນໆ;
9) ຫ້າມທຳຮ້າຍຮ່າງກາຍຜູ້ອື່ນໆ ຈົນໄດ້ຮັບບາດເຈັບ ຫຼື ເສຍຊີວິດ ຢູ່ພາຍໃນ ສຕສ;
10) ຫ້າມທຳລາຍຊັບສົມບັດສ່ວນລວມ ຫຼື ສ່ວນບຸກຄົນຢູ່ພາຍໃນ ສຕສ;
11) ຫ້າມຂາດຮຽນໂດຍບໍ່ໄດ້ຮັບອະນຸຍາດ, ຫ້າມທຸດຈະລິດໃນການຮຽນ, ການກວດກາ ແລະ ສອບເສັງ;
12) ຫ້າມຫຼິ້ນ ການພະນັນທຸກປະເພດ ຢູ່ພາຍໃນ ສຕສ;
13) ຫ້າມລັກໂລບເອົາສິ່ງຂອງສ່ວນລວມ ຫຼື ຂອງຜູ້ອື່ນມາເປັນຂອງຕົນເອງ;
14) ຫ້າມດື່ມເຫຼົ້າ ແລະ ສິ່ງມຶນເມົາຕ່າງໆ ຢູ່ພາຍໃນ ສຕສ;
15) ຫ້າມນຸ່ງເຄື່ອງແບບຂອງນັກສຶກສາໄປເຄື່ອນໄຫວວຽກສ່ວນຕົວຢູ່ຕາມສະຖານທີ່ບັນເທີງ ຫຼື ສະຖານທີ່ງບໍ່ເໝາະສົມອື່ນໆ;
16) ຫ້າມນຳໃຊ້ບັດນັກສຶກສາໄປໃນແນວທາງທີ່ຜິດຕໍ່ລະບຽບຂອງ ສຕສ ໄດ້ວາງອອກ;
17) ຫ້າມລ່ວງລ້ຳສະຖານທີ່ຕ່າງໆ ທາງລັດຖະການ ຫຼື ຄົ້ນເອກະສານທາງລັດຖະການ ຢູ່ພາຍໃນ ສຕສ;
18) ຫ້າມນັກສຶກສາຊາຍໃສ່ຕຸ້ມຫູ, ຈົ່ງໜວດ, ຈົ່ງເຄົາ, ຈົ່ງຜົມຍາວ ຫຼື ຍ້ອມສີຜົມ, ໃສ່ປອກແຄ່ງ ແລະ ຫ້າມແຕ່ງຕົວທີ່ຜິດຕໍ່ປະເພນີຂອງຊາດລາວເຮົາໄດ້ກຳນົດໄວ້ (ສຳລັບນັກສຶກສາ ທັງຍິງ ແລະ ຊາຍ);
19) ຫ້າມທຳຄວາມເປື້ອນເປິໃສ່ສະຖານທີ່ຕ່າງໆ ພາຍໃນ ສຕສ ແລະ ສາທາລະນະຕ່າງໆ;
20) ຫ້າມໃຊ້ອຸປະກອນສື່ສານອັນເປັນການລົບກວນການຮຽນ ແລະ ການປະຕິບັດວຽກງານ ທາງລັດຖະການ;
21) ຫ້າມນັກສຶກສາ ສູບຢາ, ກິນອາຫານ, ເຄື່ອງດື່ມຕ່າງໆ ໃນເວລາຮຽນ, ເວລາປະຊຸມ, ເວລາເຂົ້າຫ້ອງສະໝຸດ ແລະ ຢູ່ຕາມບໍລິເວນເຂດຫວງຫ້າມຕ່າງໆ ຂອງ ສຕສ ໄດ້ກຳນົດໄວ້;
22) ຫ້າມໃຊ້ວາຈາ ຫຼື ກິລິຍາທ່າທີບໍ່ສຸພາບຕໍ່ກັບ ພະນັກງານ ຄູ-ອາຈານ ແລະ ບຸກຄົນທົ່ວໄປ;
23) ຫ້າມນັກສຶກສາຂາດການເຂົ້າຮ່ວມການອອກແຮງງານ ແລະ ກິດຈະກຳຕ່າງໆ ທີ່ທາງການ ສຕສ ໄດ້ຈັດຂຶ້ນ ແລະ ວຽກງານນັ້ນແມ່ນໄດ້ກ່ຽວຂ້ອງກັບຕົນເອງ;
24) ຫ້າມແຕ່ງກາຍບໍ່ຖືກກົດລະບຽບຂອງນັກສຶກສາເຂົ້າມາໃນສະຖານທີ່ລັດຖະການ ຫຼື ໃນໂມງລັດຖະການ;
25) ຫ້າມນັກສຶກສາຂາດຮຽນເຖິງ 20% ຂອງຊົ່ວໂມງວິຊາໃດໜຶ່ງ;
26) ຫ້າມນັກສຶກສາມີຄະແນນຕິດ F ແລະ I ເຖິງ 3 ວິຊາໃນໜຶ່ງພາກຮຽນ;

27) ຫ້າມນັກສຶກສາຈອດລົດຊະຊາຍ ຕາມສະຖານທີ່ຕ່າງໆພາຍໃນ ສຕສ, ຕ້ອງຈອດໃນສະຖານທີ່ກຳນົດໄວ້;

ມາດຕາ 12: ການປະຕິບັດວິໄນຕໍ່ຜູ້ຜິດລະບຽບ ຂອງ ສຕສ.

ນັກສຶກສາແຕ່ລະຄົນ ມີຄະແນນຄຸນສົມບັດເຕັມ 300 ຄະແນນ ໃນໄລຍະທີ່ສຶກສາຢູ່ ສຕສ, ກໍລະນີຫາກນັກສຶກສາຄົນໃດໄດ້ ກະທຳຜິດຕໍ່ລະບຽບ, ພາຍຫຼັງມີການຕັກເຕືອນ ແລະ ສຶກສາອົບຮົມແລ້ວຈະມີການຕັດຄະແນນຄຸນສົມບັດຕາມຄວາມຜິດໃນສະຖານໜັກ ຫຼື ເບົາຕາມແຕ່ລະກໍລະນີ ທີ່ ໄດ້ກຳນົດໄວ້ໃນລະບຽບຂໍ້ຫ້າມຕ່າງໆ ແລະ ມີມາດຕະການປະຕິບັດລຸ່ມນີ້:

1) ນັກສຶກສາຜູ້ໃດຫາກໄດ້ຈັດຕັ້ງການຊຸມນຸມໃດໜຶ່ງຂຶ້ນໂດຍບໍ່ໄດ້ຮັບການອະນຸຍາດ, ໂຄສະນາໃສ່ຮ້າຍປ້າຍສີແນວທາງນະໂຍບາຍຂອງພັກ-ລັດ ແມ່ນຈະຖືກຕັດຄະແນນຄຸນສົມບັດ 300 ຄະແນນ ແລະ ໝົດສິດເປັນນັກສຶກສາ ຂອງ ສຕສ;
2) ນັກສຶກສາທີ່ໄດ້ນຳເອົາອາວຸດ, ວັດຖຸລະເບີດ, ສານພິດທຸກໆ ຊະນິດເຂົ້າມາໃນ ສຕສ ໂດຍບໍ່ໄດ້ຮັບການອະນຸຍາດແມ່ນຈະຖືກຕັດຄະແນນຄຸນສົມບັດ 300 ຄະແນນ, ຖ້າໃນກໍລະນີນຳມາທຳລາຍຜູ້ອື່ນແມ່ນຈະຖືກປະຕິບັດຕາມລະບຽບກົດໝາຍບ້ານເມືອງ ແລະ ໝົດສິດໃນການເປັນນັກສຶກສາ ຂອງ ສຕສ;
3) ນັກສຶກສາທີ່ໄດ້ມີການສົມຮູ້ຮ່ວມຄິດ ຫຼື ຊຸກເຊື່ອງເອົາຄົນ ທີ່ກະທຳຜິດຕໍ່ ລະບຽບ ກົດໝາຍບ້ານ-ເມືອງ, ຄ້າໂສເພນີ ຫຼື ນຳເອົານັກເລງອັນຕະພານເຂົ້າມາໃນ ສຕສ ແມ່ນຈະໄດ້ຖືກຮັບໂທດຕາມກົດໝາຍ ບ້ານ-ເມືອງ ທີ່ໄດ້ກຳນົດໄວ້ ແລະ ຖືກຕັດຄະແນນຄຸນສົມບັດ 300 ຄະແນນ (ປະຕິບັດວິໄນຕາມກໍລະນີໜັກ, ເບົາ);
4) ນັກສຶກສາຜູ້ໃດທີ່ໄດ້ອາລະວາດຕີກັນ ຫຼື ສ້າງຄວາມບໍ່ສະຫງົບຢູ່ພາຍໃນ ສຕສ ແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 150-300 ຄະແນນ (ໃນກໍລະນີໜັກແມ່ນຈະຕ້ອງໄດ້ໂຈະການຮຽນ);
5) ນັກສຶກສາທີ່ໄດ້ ທຳລາຍ, ປອມແປງລາຍເຊັນ ຫຼື ເອກະສານທາງການຕ່າງໆ ແມ່ນຈະໄດ້ຖືກຕັດຄະແນນຄຸນສົມບັດແຕ່ 150-300 ຄະແນນ (ປະຕິບັດວິໄນຕາມກໍລະນີໜັກ, ເບົາ);
6) ນັກສຶກສາຫາກໄດ້ ເສບ, ຊື້, ຂາຍ, ຜະລິດ ຫຼື ມີສິ່ງເສບຕິດໄວ້ໃນຄອບຄອງ ແມ່ນຈະໄດ້ຖືກຕັດຄະແນນຄຸນສົມບັດ ແຕ່ 150-300 ຄະແນນ (ໃນກໍລະນີຮ້າຍແຮງ ແມ່ນຈະໄດ້ນຳສົ່ງໃຫ້ເຈົ້າໜ້າທີ່ ບ້ານ-ເມືອງ);
7) ນັກສຶກສາທີ່ໄດ້ນຳໃຊ້ ຫຼື ເຜີຍແຜ່ອຸປະກອນສື່ລາມົກຕ່າງໆ ພາຍໃນ ສຕສ ແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 150-300 ຄະແນນ (ປະຕິບັດວິໄນຕາມກໍລະນີໜັກ, ເບົາ);
8) ນັກສຶກສາທີ່ໄດ້ມີການພົວພັນກັນກັບ ເພດກົງກັນຂ້າມທີ່ຜິດຮີດຄອງປະເພນີຂອງລາວ ແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 150-300 ຄະແນນ (ປະຕິບັດວິໄນຕາມກໍລະນີໜັກ, ເບົາ);
9) ນັກສຶກສາທີ່ຕີກັນ ຫຼື ທຳຮ້າຍຮ່າງກາຍກັນຈົນໄດ້ຮັບບາດເຈັບ ແລະ ເຮັດໃຫ້ຜູ້ອື່ນກັບມາຮຽນບໍ່ໄດ້ ແມ່ນຈະຖືກຕັດຄະ ແນນ ຄຸນສົມບັດແຕ່ 150-300 ຄະແນນ (ປະຕິບັດວິໄນຕາມກໍລະນີໜັກ, ເບົາ);

10) ນັກສຶກສາທີ່ໄດ້ທຳລາຍຊັບສິນສ່ວນລວມ ຫຼື ສ່ວນບຸກຄົນ ມູນຄ່າ 10.000 ກີບ ຂຶ້ນໄປ ແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 250-300 ຄະແນນ ພ້ອມທັງໃຊ້ແທນຄືນ ແລະ (ປະຕິບັດວິໄນຕາມກຳລະນີໜັກ, ເບົາ);

11) ນັກສຶກສາຜູ້ໃດຫາກບໍ່ປະຕິບັດລະບຽບໃນການຮຽນ, ກວດກາ ແລະ ສອບເສັງ ໃນຂັ້ນຕ່າງໆ ແມ່ນຈະຖືກຕັດຄະແນນ ຄຸນສົມບັດແຕ່ 150-300 ຄະແນນ;

12) ນັກສຶກສາທີ່ໄດ້ມີການຫຼິ້ນການພະນັນໃນຂອບເຂດ ສຕສ ຫຼື ມີສ່ວນພົວພັນກັບຄະດີການພະນັນຢູ່ແຫ່ງອື່ນແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 150-200 ຄະແນນ;

13) ນັກສຶກສາທີ່ໄດ້ລັກໂລບສິ່ງຂອງສ່ວນລວມ ຫຼື ຂອງຜູ້ອື່ນ ມູນຄ່າ 10.000 ຂຶ້ນໄປມາເປັນຂອງສ່ວນຕົນເອງແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 150-200 ຄະແນນ ພ້ອມທັງໃຊ້ແທນໃຫ້ຄືນຕາມຈຳນວນ;

14) ນັກສຶກສາທີ່ໄດ້ມີການດື່ມສິ່ງມຶນເມົາ ແລະ ອາລະວາດສ້າງຄວາມເສຍຫາຍ ແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 150-200 ຄະແນນ ພ້ອມທັງໃຊ້ແທນຄ່າເສຍຫາຍທັງໝົດທີ່ຜູ້ກ່ຽວໄດ້ກໍ່ຂຶ້ນນັ້ນ;

15) ນັກສຶກສາທີ່ໄດ້ລ່ວງລ້ຳສະຖານທີ່ລັດຖະການ ຫຼື ລັກຄົ້ນເອກະສານທາງການ ແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 100-150 ຄະແນນ (ຖ້າແຕະຕ້ອງຕໍ່ວຽກງານ ປກສ, ປກຊ ແມ່ນຈະໄດ້ສົ່ງໃຫ້ເຈົ້າໜ້າທີ່ ກ່ຽວຂ້ອງດຳເນີນຄະດີ ແລະ ປະຕິບັດຕາມລະບຽບ ກົດໝາຍບ້ານ-ເມືອງ ແລະ ໝົດສິດເປັນນັກສຶກສາ ຂອງ ສຕສ);

16) ນັກສຶກສາທີ່ນຸ່ງເຄື່ອງແບບນັກສຶກສາໄປເຄື່ອນໄຫວໃນສະຖານທີ່ບັນເທີງ ແລະ ສະຖານ ທີ່ບໍ່ເໝາະສົມອື່ນໆ ແມ່ນ ຈະຖືກຕັດຄະແນນຄຸນສົມບັດແຕ່ 150-200 ຄະແນນ ພ້ອມທັງສຶກສາອົບຮົມ ແລະ ຕັກເຕືອນ;

17) ນັກສຶກສາທີ່ໄດ້ນຳໃຊ້ບັດນັກສຶກສາໄປໃນທາງທີ່ບໍ່ເໝາະສົມແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 50-100 ຄະແນນພ້ອມທັງໄດ້ມີການຕັກເຕືອນ;

18) ນັກສຶກສາທີ່ໃສ່ຕຸ້ມຫູ, ຈົ່ງໜວດ, ຈົ່ງເຄົາ, ຈົ່ງຜົມຍາວ (ຊາຍ) ຫຼື ຍ້ອມສີຜົມຕ່າງໆ, ໃສ່ປອກແຄ່ງ (ທັງຍິງ ແລະ ຊາຍ), ແຕ່ງຕົວທີ່ຜິດຕໍ່ປະເພນີຂອງຊາດລາວເຮົາໄດ້ກຳນົດໄວ້ ແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 100-150 ຄະແນນພ້ອມທັງໄດ້ສຶກສາອົບຮົມ ແລະ ຕັກເຕືອນ;

19) ນັກສຶກສາທີ່ໄດ້ສ້າງຄວາມເປື້ອນເປິໃສ່ສະຖານທີ່ສາທາລະນະຕ່າງໆ ແມ່ນຈະຖືກ ຕັດຄະແນນຄຸນສົມບັດ ແຕ່ 50-150 ຄະແນນ ພ້ອມທັງໄດ້ສຶກສາອົບຮົມ ແລະ ຕັກເຕືອນ;

20) ນັກສຶກສາທີ່ບິນແຊວ ຫຼື ໃຊ້ເຄື່ອງມືສື່ສານເຊິ່ງເປັນການລົບກວນໃນການຮຽນ ຫຼື ການເຮັດວຽກທາງລັດຖະການແມ່ນຈະຖືກ ຕັດຄະແນນຄຸນສົມບັດແຕ່ 50-100 ຄະແນນ ພ້ອມທັງໄດ້ມີການຕັກເຕືອນ;

21) ນັກສຶກສາທີ່ໄດ້ ສູບຢາ, ກິນອາຫານ, ດື່ມເຄື່ອງດື່ມຕ່າງໆໃນເວລາຮຽນ, ເວລາປະຊຸມ, ເຂົ້າຫ້ອງສະໝຸດ ແລະ ຢູ່ຕາມບໍລິເວນຫວງຫ້າມຕ່າງໆ ແມ່ນຈະຖືກ ຕັດຄະແນນຄຸນສົມບັດແຕ່ 50-100 ຄະແນນ ພ້ອມທັງໄດ້ມີການ ຕັກເຕືອນ;

22) ນັກສຶກສາທີ່ໃຊ້ວາຈາ ຫຼື ທ່າທີບໍ່ສຸພາບຕໍ່ພະນັກງານ ຄູ-ອາຈານ ແລະ ຜູ້ອື່ນໆ ແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 50-100 ຄະແນນພ້ອມທັງໄດ້ມີການຕັກເຕືອນ;

23) ນັກສຶກສາທີ່ບໍ່ໄດ້ເຂົ້າຮ່ວມການອອກແຮງງານ ຫຼື ບໍ່ເຂົ້າຮ່ວມກິດຈະກຳອື່ນໆທີ່ການຈັດຕັ້ງໄດ້ຈັດຂຶ້ນ ແລະ ກ່ຽວຂ້ອງກັບຕົນເອງແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 50-100 ຄະແນນ ພ້ອມທັງໄດ້ມີການຕັກເຕືອນ;

24) ນັກສຶກສາທີ່ແຕ່ງກາຍບໍ່ຖືກລະບຽບຂອງນັກສຶກສາເຂົ້າໃນສະຖານທີ່ລັດຖະການໃນໂມງລັດຖະການແມ່ນຈະຖືກຕັດຄະແນນຄຸນສົມບັດແຕ່ 50-100 ຄະແນນ ພ້ອມທັງໄດ້ມີການຕັກເຕືອນ;

25) ນັກສຶກສາທີ່ຂາດຮຽນເຖິງ 20% ຂອງວິຊາຮຽນໃດໜຶ່ງ ຕ້ອງແກ້ຄະແນນຄືນຕາມລະບຽບກຳນົດໄວ້, ຖ້າບໍ່ດັ່ງນັ້ນ ຈະບໍ່ມີສິດເຂົ້າສອບເສັງ ຈົບວິຊາດັ່ງກ່າວ;

26) ນັກສຶກສາທີ່ມີຄະແນນ F ແລະ I ເຖິງ 3 ວິຊາໃນ 1 ພາກຮຽນ ແມ່ນຕ້ອງຄ້າງຫ້ອງ (ບໍ່ມີສິດຂຶ້ນຫ້ອງ);

27) ນັກສຶກສາທີ່ຈອດລົດຊະຊາຍຕາມສະຖານທີ່ຕ່າງໆ ພາຍໃນ ສຕສ, ບໍ່ຈອດໃນສະຖານທີ່ ທີ່ກຳນົດໄວ, ແມ່ນຈະຖືກຕັດຄະແນນ ຄຸນສົມບັດແຕ່ 50-100 ຄະແນນ ພ້ອມທັງໄດ້ມີການຕັກເຕືອນ;

ມາດຕາ 13: ມາດຕະການທາງວິໄນຕໍ່ຜູ້ລະເມີດແມ່ນຈະຖືກດຳເນີນການຕາມຂັ້ນຕອນລຸ່ມນີ້:

1) 50-100 ຄະແນນ ຖືກຕັກເຕືອນຈາກຄູ-ອາຈານປະຈຳຫ້ອງ;
2) 101-150 ຄະແນນ ຖືກຕັກເຕືອນຈາກຫົວໜ້າພາກວິຊາ ພ້ອມທັງແຈ້ງໃຫ້ຜູ້ປົກຄອງຮັບຮູ້;
3) 151-200 ຄະແນນ ໃຫ້ຂຽນໃບສຳຫຼວດໄວ້ພະແນກ ຄຸ້ມຄອງ ແລະ ກິດຈະກຳນັກສຶກສາ ແລະ ແຈ້ງໃຫ້ຜູ້ປົກຄອງຮັບຮູ້;
4) 201-250 ຄະແນນ ຖືກຕັກເຕືອນຈາກຄະນະນຳ ສຕສ ແລະໃຫ້ຜູ້ປົກຄອງ ມາຂຽນໃບຄ້ຳປະກັນການປະພຶດ;
5) 251-300 ຄະແນນ ຈະຖືກກ່າວເຕືອນ, ຄ້າງຫ້ອງ, ຖ້າຜູ້ກ່ຽວບໍ່ປ່ຽນແປງທາງດ້ານແນວຄິດ ແລະ ການກະທຳແມ່ນຈະຖືກ ລົບລ້າງ ຜົນການຮຽນໝົດພາກຮຽນ ຫຼື ໝົດສົກຮຽນ ແລະ ປະຕິບັດວິໄນໝົດສິດໃນການເປັນນັກສຶກສາ ສຕສ;
6) ການຕັດຄະແນນຄຸນສົມບັດໃນແຕ່ລະຄັ້ງລວມທັງໝົດຮອດ 300 ຄະແນນ ແມ່ນໝົດສະຖານະພາບ ການເປັນນັກສຶກສາໃນ ສຕສ ແລະ ຄ່າໃຊ້ຈ່າຍຕ່າງໆ ຜ່ານມາຖືກລົບລ້າງ (ການຈັດຕັ້ງ ສຕສ ແມ່ນຕ້ອງໄດ້ລາຍງານໃຫ້ຜູ້ປົກຄອງໄດ້ຮັບຊາບ);

ມາດຕາ 14: ວິທີຈັດຕັ້ງປະຕິບັດໃນການຕັດຄະແນນຄຸນສົມບັດຂອງນັກສຶກສາ ມີຄືດັ່ງລຸ່ມນີ້:

1) ພະນັກງານ ຄູ-ອາຈານ ແລະ ການຈັດຕັ້ງທຸກຂັ້ນ ຂອງ ສຕສ ແມ່ນໄດ້ລົງຕິດຕາມ ເກັບກຳກ່ຽວກັບການເຄື່ອນໄຫວ ແລະ ການປະພຶດ ຂອງນັກສຶກສາພາຍໃນ ສຕສ ທີ່ລະເມີດຕໍ່ລະບຽບຕ່າງໆ ທີ່ ສຕສ ໄດ້ກຳນົດໄວ້ໃນມາດຕາຕ່າງໆ;
2) ໃນກໍລະນີທີ່ ນັກສຶກສາຜູ້ໃດ ຫາກຖືກຕັດຄະແນນຄຸນສົມບັດທັງໝົດ 300 ຄະແນນແລ້ວ ການຈັດຕັ້ງ ຂອງ ສຕສ ຕ້ອງໄດ້ລາຍງານໃຫ້ ຄະນະນຳ ສຕສ ເພື່ອຕັດສິນປະຕິບັດວິໄນ ຕາມລະບຽບ ຂອງ ສຕສ;

ມາດຕາ 15: ການລາພັກ ຂອງນັກສຶກສາໃນ ສຕສ.

ໃນໄລຍະທີ່ມີການສອບເສັງ ແລະ ການຮຽນຢູ່ນັ້ນ ຖ້ານັກສຶກສາ ມີຄວາມຕ້ອງການຈະລາພັກ, ຜູ້ກ່ຽວຕ້ອງຂຽນຄໍາຮ້ອງສະເໜີຕໍ່ການຈັດຕັ້ງທຸກໆ ຂັ້ນ: ຖ້າເຈັບເປັນຕ້ອງມີໃບຢັ້ງຢືນຈາກແພດ, ຖ້າມີຄວາມຫຍຸ້ງຍາກຈໍາເປັນອື່ນໆ ຕ້ອງມີການຢັ້ງຢືນຈາກຜູ້ປົກຄອງ ແລະ ອໍານາດການປົກຄອງທ້ອງຖິ່ນ ສ່ວນການພິຈາລະນາລາພັກໃນແຕ່ລະກໍລະນີໃຫ້ປະຕິບັດດັ່ງນີ້:

1) 1-2 ວັນ ແມ່ນຄູ-ອາຈານປະຈໍາຫ້ອງເປັນຜູ້ອະນຸຍາດ;
2) 3-7 ວັນ ແມ່ນຫົວໜ້າພາກວິຊາ ເປັນຜູ້ອະນຸຍາດ;
3) 8-30 ວັນແມ່ນຫົວໜ້າພະແນກ ຄຸ້ມຄອງ ແລະ ກິດຈະກໍານັກສຶກສາ ເປັນຜູ້ອະນຸຍາດ;
4) ເກີນ 30 ວັນຂຶ້ນໄປແມ່ນຫົວໜ້າ ສຕສ ເປັນຜູ້ອະນຸຍາດໂດຍຜ່ານພະແນກຄຸ້ມຄອງ ແລະ ກິດຈະກໍານັກສຶກສາ;

ມາດຕາ 16: ການສິ້ນສຸດການເປັນ ນັກສຶກສາ ຂອງ ສຕສ.

1) ເສຍຊີວິດ;
2) ເປັນພະຍາດຕິດແປດທີ່ຮ້າຍແຮງ, ເປັນບ້າ, ເສຍຈິດ ແລະ ອື່ນໆ;
3) ໄດ້ຮັບອະນຸຍາດໃຫ້ລາອອກ;
4) ຍ້າຍໄປຮຽນຢູ່ ສະຖາບັນການສຶກສາອື່ນໆ ຢູ່ພາຍໃນ ຫຼື ຕ່າງປະເທດ;
5) ຖືກຕັດສະຖານະພາບເປັນນັກສຶກສາ ສຕສ;
6) ຮຽນຈົບ ແລະ ໄດ້ຮັບປະກາສະນີຍະບັດແລ້ວ;
7) ຮຽນບໍ່ຈົບຕາມເນື້ອໃນຫຼັກສູດ ຫຼື ກໍານົດເວລາທີ່ ສຕສ ໄດ້ກໍານົດໄວ້;

ມາດຕາ 17: ການໃຫ້ທຶນການສຶກສາ ແລະ ການຍ້ອງຍໍ ກ່ຽວກັບ ນັກສຶກສາ ໃນ ສຕສ.

ນັກສຶກສາ ສຕສ ທຸກຄົນທີ່ຮຽນເກັ່ງ, ມີຜົນງານດີເດັ່ນ ແລະ ເປັນແບບຢ່າງທີ່ດີ ໃນການປະຕິບັດມະຕິ, ຄໍາສັ່ງ, ຂໍ້ກໍານົດ ແລະ ກົດລະບຽບການຕ່າງໆ ຈະໄດ້ຮັບການພິຈາລະນາໃຫ້ທຶນການສຶກສາ ແລະ ການຍ້ອງຍໍຈາກການຈັດຕັ້ງທີ່ກ່ຽວຂ້ອງຂອງ ສຕສ ດ້ວຍຮູບການໃດໜຶ່ງທີ່ເໝາະສົມດັ່ງຕໍ່ໄປນີ້:

1) ນັກສຶກສາທີ່ໄດ້ຮັບທຶນການສຶກສາຕ້ອງມີຄະແນນສະເລ່ຍ 3,50 ຂຶ້ນໄປ ໃນແຕ່ລະປີໂດຍບໍ່ໄດ້ເກັບໜ່ວຍກິດຄືນຂອງແຕ່ລະວິຊາຮຽນ;
2) ຕິດຊື່ ແລະ ຮູບໃສ່ກະດານຂ່າວຂອງ ສຕສ;
3) ໄດ້ຮັບລາງວັນເປັນວັດຖຸ ແລະ ນະໂຍບາຍອື່ນໆທີ່ເໝາະສົມ;
4) ໄດ້ຮັບໃບຍ້ອງຍໍຈາກພະແນກຄຸ້ມຄອງ ແລະ ກິດຈະກໍານັກສຶກສາ, ຫົວໜ້າ ສຕສ ແລະ ລັດຖະມົນຕີກະຊວງ ຕສ ຫລື ລັດຖະບານ ຕາມລໍາດັບ;
5) ໄດ້ຮັບປະກາສະນີຍະບັດກຽດນິຍົມເມື່ອສໍາເລັດການສຶກສາ;
6) ຈາລຶກຊື່ໄວ້ໃນປື້ມປະຫວັດສາດຂອງ ສຕສ ຫລື ກະຊວງ ຕສ;

ມາດຕາ 18: ນະໂຍບາຍຕໍ່ນັກສຶກສາທີ່ໄດ້ຮັບທຶນຝຶກອົບຮົມພາຍໃນ ຫລື ຕ່າງປະເທດ ທີ່ການຈັດຕັ້ງ ສຕສ ຫຼື ກະຊວງ ຕສ ສົ່ງໄປໄລຍະສັ້ນ 03-06 ເດືອນ.

1) ແມ່ນໃຫ້ປະຕິບັດຕາມລະບຽບແຜນການສອນໃນຫລັກສູດ;

2) ໃນກໍລະນີທີ່ໄປຝຶກອົບຮົມ ຖ້າຫາກມີວິຊາໃດທີ່ຜູ້ກ່ຽວໄປຝຶກອົບຮົມ ກົງກັນກັບວິຊາທີ່ມີຮຽນໃນຫລັກສູດ ແມ່ນໃຫ້ເອົາຄະແນນມາທຽບໃສ່ກັນໄດ້ໂດຍບໍ່ຕ້ອງບຳລຸງຄືນ, ແຕ່ຕ້ອງເຮັດລາຍງານໃຫ້ອາຈານປະຈຳວິຊາດັ່ງກ່າວ;
3) ຖ້າໄປຝຶກອົບຮົມຢູ່ຕ່າງປະເທດແລ້ວກັບມາທັນ ແມ່ນໃຫ້ຮຽນພ້ອມກັບນັກສຶກສາທີ່ແກ້ເກຣດ ຖ້າບໍ່ກົງກັນ ແມ່ນໃຫ້ຮຽນພາກຄ່ຳ (ໃນເວລາ 02 ອາທິດ) ໃນວິຊາທີ່ຜູ້ກ່ຽວບໍ່ໄດ້ຮຽນ;
4) ສຕສ ຈະຈ່າຍເງິນໂມງສອນໃຫ້ຄູທີ່ສິດສອນບຳລຸງຕາມຊົ່ວໂມງສອນ ເຊິ່ງຈະບໍ່ໄດ້ເກັບນຳນັກສຶກສາຕື່ມອີກ;

ມາດຕາ 19: ການປະຕິບັດວິໄນກ່ຽວກັບ ນັກສຶກສາ ໃນ ສຕສ.

ນັກສຶກສາຜູ້ທີ່ປະພຶດຕົນບໍ່ດີ, ກະທຳຜິດຕໍ່ກົດລະບຽບ, ຂໍ້ກຳນົດຕ່າງໆຂອງ ສຕສ ຫຼື ກະທຳຜິດລະບຽບກົດໝາຍ ແລະ ຮີດຄອງປະເພນີ, ລ້ວນແຕ່ຈະຖືກປະຕິບັດວິໄນດ້ວຍຮູບການໃດໜຶ່ງຕາມແຕ່ລະກໍລະນີດັ່ງຕໍ່ໄປນີ້:

1) ຖືກຕັກເຕືອນ ແລະ ຂຽນໃບສຳຫຼວດ;
2) ໂຈະ ຫຼື ລົບລ້າງຜົນການສອບເສັງ, ໂຈະ ຫຼື ຕັດສິດການຮັບປະກາສະນີຍະບັດ;
3) ຕັດສະຖານະພາບເປັນນັກສຶກສາ ສຕສ;
4) ຕັດສະຖານະພາບເປັນນັກສຶກສາ ສຕສ ພ້ອມທັງປະກອບສຳນວນຟ້ອງສານ;

ມາດຕາ 20: ການຍ້ອງຍໍ ຫຼື ປະຕິບັດວິໄນຕໍ່ນັກສຶກສາແຕ່ລະຄັ້ງຕ້ອງໄດ້ຜ່ານການຄົ້ນຄວ້າພິຈາລະນາຈາກຄະນະກຳມະການຍ້ອງຍໍ-ວິໄນ ຂອງ ສຕສ ຄະນະດັ່ງກ່າວປະກອບໂດຍຕຳແໜ່ງດັ່ງຕໍ່ໄປນີ້:

1) ຫົວໜ້າ ສຕສ ຫຼື ຜູ້ຖືກມອບໝາຍ ເປັນປະທານ;
2) ບັນດາຮອງ ຫົວໜ້າ ສຕສ ເປັນຮອງປະທານ;
3) ຄະນະພະແນກການ ສຕສ ທີ່ກ່ຽວຂ້ອງ ເປັນກຳມະການ;
4) ຕົວແທນອົງການຈັດຕັ້ງມະຫາຊົນຂັ້ນ ສຕສ ເປັນກຳມະການ;
5) ຫົວໜ້າພະແນກຄຸ້ມຄອງ ແລະ ກິດຈະກຳນັກສຶກສາເປັນເລຂານຸການ;

ມາດຕາ 21: ການແບ່ງຂັ້ນໃນການຍ້ອງຍໍ ແລະ ປະຕິບັດວິໄນຕໍ່ນັກສຶກສາ ໃຫ້ປະຕິບັດດັ່ງນີ້:

1) ການຍ້ອງຍໍລະດັບຄະນະວິຊາການລົງໄປແມ່ນຫົວໜ້າພະແນກ ຄຸ້ມຄອງ ແລະ ກິດຈະກຳນັກສຶກສາ ລົງລາຍເຊັນຕົກລົງ ແລະ ລາຍງານໃຫ້ຫົວໜ້າ ສຕສ ຮັບຮູ້ ໃນເວລາອັນຄວນ, ສ່ວນການຍ້ອງຍໍລະດັບ ສຕສ ແມ່ນຫົວໜ້າ ສຕສ ເປັນຜູ້ຕົກລົງໂດຍໄດ້ຮັບ ການສະເໜີຈາກຫົວໜ້າພະແນກຄຸ້ມຄອງ ແລະ ກິດຈະກຳນັກສຶກສາ;
2) ການປະຕິບັດວິໄນລະດັບກ່າວເຕືອນຄວາມຜິດ, ຂຽນໃບສຳຫຼວດຕົວເອງ ແລະ ແຈ້ງໃຫ້ຜູ້ປົກຄອງຮັບຮູ້ ແລະ ມີການຕັດ ຄະແນນ ຄຸນສົມບັດຕ່ຳກວ່າ 300 ຄະແນນ ແມ່ນຫົວໜ້າພະແນກ ຄຸ້ມຄອງ ແລະ ກິດຈະກຳນັກສຶກສາ ເປັນຜູ້ລົງລາຍເຊັນການຕົກລົງຫລັງ ຈາກຜ່ານການເຫັນດີຂອງຄະນະກຳມະການຍ້ອງຍໍ ແລະ ວິໄນຂອງຄະນະກຳມະການແລ້ວລາຍງານໃຫ້ຫົວໜ້າ ສຕສ ຮັບຮູ້ໃນເວລາອັນຄວນ;
3) ສ່ວນການປະຕິບັດວິໄນເຖິງຂັ້ນຕັດຄະແນນຄຸນສົມບັດຮອດ 300 ຄະແນນ ແມ່ນຫົວໜ້າ ສຕສ ເປັນຜູ້ຕົກລົງພາຍຫລັງຜ່ານການເຫັນດີຈາກຄະນະກຳມະການຍ້ອງຍໍ ແລະ ວິໄນຂັ້ນ ສຕສ ແລະ ໄດ້ຮັບການສະເໜີຈາກຫົວໜ້າພະແນກ ຄຸ້ມຄອງ ແລະ ກິດຈະກຳນັກສຶກສາ;

4) ໃນກໍລະນີນັກສຶກສາມີສ່ວນພົວພັນກັບຄະດີອາຍາ ຫຼື ຖືກກັກຕົວແຕ່ບໍ່ທັນໄດ້ຮັບການຕັດສິນລົງໂທດ ນັກສຶກສາຜູ້ນັ້ນຈະຖືກຕັດສິດການຮຽນ ຫຼື ໃຫ້ໂຈະການຮຽນຈົນກວ່າຈະມີຄໍາຕັດສິນຈາກສານວ່າບໍ່ມີຄວາມຜິດຈຶ່ງໃຫ້ສືບຕໍ່ຮຽນໄດ້, ຖ້າຫາກຄໍາຕັດສິນວ່າມີຄວາມຜິດແທ້ກໍ່ຈະຖືກປະຕິບັດຕັດຄະແນນຕາມລະບຽບການ;

ມາດຕາ 22: ປ່ຽນແທນຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງນັກສຶກສາ ສະບັບເລກທີ 597/ສຕສ, ລົງວັນທີ 30 ມິຖຸນາ 2022, ຂໍ້ກໍານົດອື່ນໃນເມື່ອກ່ອນທີ່ຂັດກັບຂໍ້ກໍານົດສະບັບນີ້ລ້ວນແຕ່ຖືກລົບລ້າງ;

ມາດຕາ 23: ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;

ມາດຕາ 24: ຂໍ້ກໍານົດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າສະຖາບັນ**

ປອ. ປະດັບໄຊ ໄຊຍະໂຄດ